## ບົດຮຽນໂຮງຮຽນວັນອາທິດ
**ວັນອາທິດ ທີ 5 ເມສາ 2020 (4-5-2020)**

# ຊີວິດອັນຕລອດໄປເປັນນິດ

### *ຖ້າທ່ານສາມາດຢູ່ບ່ອນໃດກໍໄດ້ໃນໂລກນີ້, ທ່ານຈະຢູ່ທີ່ໃດ?*

***ຈຸດສຳຄັນໃນບົດຮຽນ:*** *ພວກເຮົາສາມາດຢູ່ຕລອດໄປເປັນນິດໃນບ່ອນຊົງສະຖິດຢູ່ຂອງພຣະເຈົ້າ.*

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ສະຖານທີ່, ສະຖານທີ່, ສະຖານທີ່. ພວກນາຍໜ້າຊື້/ຂາຍດິນແລະສິ່ງປຸກສ້າງສ່ວນຫຼາຍຈະຢ້ຳຄຳເວົ້າເຫຼົ່ານີ້ສູ່ລູກຄ້າທີ່ຊອກຫາບ່ອນຢູ່ໃໝ່ຂອງພວກເຂົາ. ອິນເທີແນັດກໍໄດ້ໃຫ້ຂໍ້ມູນຢ່າງຫຼວງຫຼາຍເພື່ອຊ່ວຍພວກເຮົາໃນການຕັດສິນໃຈ...

...ບ່ອນຢູ່ອາສັຍອັນດີທີ່ສຸດ. ...ບ່ອນຢູ່ທີ່ດີທີ່ສຸດສຳລັບພວກທີ່ກິນເບັ້ຍບຳນານ. ...ບ່ອນດີທີ່ສຸດສຳລັບລ້ຽງລູກເຕົ້າ. ...ບ່ອນທີ່ບໍ່ແພງເກີນໄປ. ...ບ່ອນທີ່ດີທີ່ສຸດທີ່ມີອາກາດແລະນ້ຳທີ່ສະອາດ.

ຄົນເຮົາມີເຫດຜົນຫຼວງຫຼາຍໃນການເລືອກທີ່ຢູ່ຂອງພວກເຂົາ. ແນ່ນອນ, ມີຫຼາຍໆຄົນບອກວ່າເຂົາບໍ່ໄດ້ເລືອກບ່ອນທີ່ເຂົາຈະຢູ່ແຕ່ບ່ອນຢູ່ "ເລືອກ" ພວກເຂົາ. ຍົກຕົວຢ່າງ, ຫຼາຍໆຄົນຢູ່ທີ່ບ່ອນເຂົາຢູ່ນັ້ນກໍເພາະວ່າຄອບຄົວແລະວຽກການຂອງພວກເຂົາກໍຢູ່ໃກ້ນັ້ນ. ຈະເປັນແນວໃດກໍຕາມ, ພວກເຮົາລ້ວນແຕ່ມີຄວາມຄິດເຫັນຂອງພວກເຮົາເອງທີ່ເຮັດໃຫ້ທີ່ນັ້ນເປັນບ່ອນພິເສດ. ເຖິງຢ່າງໃດກໍຕາມ, ເຖິງທຳມະຊາດຈະງົດງາມພຽງໃດກໍຕາມ, ບໍ່ມີບ່ອນໃດສົມບູນແບບ. ບັນຫາຕ່າງໆກໍຍັງເກີດມີຢູ່. ແລະ, ແນ່ນອນທີ່ສຸດ, ບາບກໍຢູ່ທີ່ນັ້ນແລ້ວ.

ມັນຄົງບໍ່ເປັນຢ່າງນັ້ນໃນທຸກກໍລະນີສເນີໄປ. ພຣະເຈົ້າໄດ້ສັນຍາຕໍ່ພວກຕິດຕາມຂອງພຣະອົງວ່າເຮືອນທີ່ສົມບູນແບບກັບພຣະອົງນັ້ນກໍຕັ້ງຢູ່ຕລອດໄປເປັນນິດ. ອັກຄະສາວົກໂຢຮັນໄດ້ໃຫ້ພວກເຮົາເຫັນແບບສັ້ນໆຂອງຊີວິດອັນຕລອດໄປເປັນນິດວ່າມັນລໍຖ້າຜູ້ທີ່ຕິດຕາມພຣະຄຣິດຢູ່.

**ພຣະຄັມພີກ່າວວ່າຢ່າງໃດ? (ຈົ່ງເບິ່ງຕາມຂໍ້ 1, 2, ແລະ 3)**

**<u>ການສຶກສາພຣະຄັມພີ</u>**

### 1. ພຣະນິມິດ 21:1-5

*1. ແລ້ວຂ້າພະເຈົ້າໄດ້ເຫັນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ ເພາະວ່າທ້ອງຟ້າເດີມແລະແຜ່ນດິນເດີມນັ້ນໄດ້ລ່ວງ*
*ໄປແລ້ວ ແລະທະເລກໍບໍ່ມີເໝືອນກັນ. 2. ຂ້າພະເຈົ້າໄດ້ເຫັນນະຄອນສັກສິດ ຄືກຸງເຢຣູຊາເລັມໃໝ່ ກຳລັງລົງ*
*ມາຈາກສວັນແລະຈາກພຣະເຈົ້າ ນະຄອນນີ້ໄດ້ຈັດຕຽມໄວ້ແລ້ວເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ.*
*3. ຂ້າພະເຈົ້າໄດ້ຍິນສຽງດັງມາຈາກພຣະຣາຊບັນລັງວ່າ, "ເບິ່ງແມ, ທີ່ສະຖິດຂອງພຣະເຈົ້າກໍຢູ່ກັບມະນຸດແລ້ວ*
*ພຣະອົງຈະຊົງສະຖິດຢູ່ກັບເຂົາ ເຂົາພວກນັ້ນແຫຼະ, ຈະເປັນໄພ່ພົນຂອງພຣະອົງ ແລະພຣະເຈົ້າເອງຈະປະທັບ*
*ຢູ່ກັບເຂົາ. 4. ພຣະເຈົ້າຈະຊົງເຊັດນ້ຳຕາທຸກຢົດຈາກຕາຂອງເຂົາ ຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກ*
*ເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ. 5.*
*ພຣະອົງຜູ້ຊົງປະທັບເທິງພຣະຣາຊບັນລັງໄດ້ຊົງກ່າວວ່າ, "ເບິ່ງແມ, ເຮົາສ້າງສິ່ງທັງປວງຂຶ້ນໃໝ່" ແລະພຣະອົງ*
*ຊົງກ່າວອີກວ່າ, "ຈົ່ງຂຽນໄວ້ ເພາະວ່າຖ້ອຍຄຳເຫຼົ່ານີ້ແຫຼະ, ສັດຊື່ແລະທ່ຽງແທ້"*

**ພຣະເຈົ້າໄດ້ໃຫ້ສັນຍາກັບພວກບຸດຂອງພຣະອົງໃຫ້ມີທີ່ຢູ່ອັນຕລອດໄປທີ່ສຸຣິຍະຄາດ(ກົບກິນຕາເວັນ),ຈັນທະຄາດ (ກົບກິນເດືອນ)ເກີດຂຶ້ນມີເພື່ອນບ້ານທີ່ແສນດີໃນທົ່ວຂົງເຂດເລກໂຄດໄປສະນີ. ບ້ານຂອງພວກເຮົາກັບພຣະເຈົ້າເປັນ**

ສະຖານທີ່ໆສົມບູນແບບເພາະວ່າມັນເປັນທີ່ສະຖິດຢູ່ຂອງພຣະເຈົ້າເອງ. ພຣະຄໍາພຣະນິມິດບົດທີ່ 21 ເປັນພາບຂອງບ້ານທີ່ສົມບູນແບບຂອງພຣະເຈົ້າ. ແລະຄວາມສົມບູນແບບອັນນັ້ນເປັນຄວາມຈິງໄດ້ກໍເພາະຫຼັກຖານທີ່ພຣະເຈົ້າເອງຈະຢູ່ກັບພວກເຮົາໃນທີ່ນັ້ນຕລອດໄປເປັນນິດ. ພຣະເຈົ້າທີ່ໄດ້ເນຣະມິດໃຫ້ຈັກກະວານເກີດຂຶ້ນກໍໄດ້ສັນຍາວ່າຈະໃຊ້ເວລາຕລອດໄປກັບທ່ານແລະຂ້າພະເຈົ້າ!

ພຣະຄໍາພຣະນິມິດບົດທີ່ 21 ເລີ່ມດ້ວຍຮູບພາບທີ່ອັສຈັນ. ແຜ່ນດິນສວັນໃໝ່ແລະໂລກໃໝ່ກໍຈະຍິ່ງໃຫຍ່ກວ່າໂລກທີ່ພວກເຮົາຮູ້ຈັກຢູ່ດຽວນີ້; ພວກມັນຈະເໜືອກ່ວາທຸກສິ່ງທີ່ພວກເຮົາໄດ້ເຄີຍປະສົບມາ. ນອກຈາກແຜ່ນດິນສວັນແລະໂລກໃໝ່, ທ່ານໂຢຮັນຍັງໄດ້ເຫັນ "ກຸງເຢຣູຊາເລັມໃໝ່" ແລະມັນຄ້າຍຄືກັບເຈົ້າສາວທີ່ສວຍງາມກໍາລັງຍ່າງລົງມາຕາມທາງຍ່າງໃນວັນແຕ່ງງານຂອງນາງ. ເຈົ້າສາວທີ່ເບິ່ງແຈ່ມໃສທີ່ສຸດໃນວັນແຕ່ງງານຂອງນາງ, ແລະທີ່ນີ້ຄືເຈົ້າສາວທີ່ຄວາມແຈ່ມໃສຈະບໍ່ມີຈືດຈາງຈັກເທື່ອ.

| |
|---|
| ແມ່ນຫຍັງຄືບາງທາງໃນສັງຄົມຂອງພວກເຮົາທີ່ສະແດງອອກໃນລະບົບຂອງສວັນ? |

ທ່ານໂຢຮັນໄດ້ເລົ່າເຖິງເຢຣູຊາເລັມໃໝ່ວ່າ "ເມືອງບໍຣິສຸດ." ສະຖານທີ່ສັກສິດເພາະວ່າທຸກໆຄົນໃນທີ່ນັ້ນບໍຣິສຸດແລະຊອບທັມ.

ອັນນີ້ແມ່ນເມືອງຂອງພຣະເຈົ້າທີ່ໄດ້ໄຖ່ມະນຸສໂລກ, ແລະການອາສັຍຢູ່ໃນເມືອງນີ້ມີຄວາມໝາຍວ່າພວກເຮົາຈະຢູ່ດ້ວຍກັນ- ແລະຈະຢູ່ດ້ວຍກັນຢ່າງສຸກສົມບູນ. ພວກເຮົາຈະບໍ່ມີການຕໍ່ສູ້ຄວາມຂັດແຍ້ງລະຫວ່າງການທີ່ຈະໃຫ້ພໍພຣະທັຍພຣະເຈົ້າຫຼືໃຫ້ພໍໃຈມະນຸດເພາະວ່າຄວາມບາບແລະຄວາມຕາຍໄດ້ຖືກປະລາຊັຍແລະພວກເຮົາຈະຢູ່ຕລອດໄປຊຶ່ງອ້ອມຮອບດ້ວຍຄວາມບໍຣິສຸດຂອງພຣະເຈົ້າ.

**ເມື່ອພວກເຮົາຢູ່ໃນທີ່ສະຖິດຂອງພຣະອົງຕລອດໄປແລ້ວ**, "ພຣະເຈົ້າຈະຊົງເຊັດນໍ້າຕາທຸກໆຢົດຈາກຕາຂອງເຂົາຄວາມຕາຍຈະບໍ່ມີອີກຕໍ່ໄປ ຄວາມໂສກເສົ້າ ການຮ້ອງໄຫ້ ແລະຄວາມເຈັບປວດຈະບໍ່ມີອີກຕໍ່ໄປ" (ຂໍ້ 4). ບໍ່ມີຄວາມຕາຍ, ບໍ່ມີໂສກເສົ້າ, ບໍ່ມີຮ້ອງໄຫ້, ບໍ່ມີຄວາມເຈັບປວດ. ສິ່ງເຫຼົ່ານີ້ຈະບໍ່ມີໃນແຜ່ນດິນສວັນ "ເພາະວ່າສິ່ງທີ່ມີຢູ່ຄາວກ່ອນນັ້ນກໍລ່ວງໄປແລ້ວ." ສັນດານມະນຸດອັນເກົ່າທັງໝົດຂອງພວກເຮົາຊຶ່ງເປັນພາກສ່ວນຂອງການຫຼົ້ມເຫຼວຂອງພວກເຮົາ, ທໍາມະຊາດຄວາມຜິດບາບຂອງມະນຸດຈະລ່ວງຫາຍໄປ-ຕລອດໄປເປັນນິດ.

ພາຣະກິດຮັບໃຊ້ຂອງພຣະອົງຕໍ່ໂລກນີ້ໃກ້ຈະເຖິງຈຸດຈົບແລ້ວ, ພຣະເຢຊູໄດ້ບອກພວກສາວົກຂອງພຣະອົງວ່າ "ເພາະເຮົາໄປຈັດແຈງບ່ອນໄວ້ສໍາລັບທ່ານທັງຫຼາຍ" (ຢຮ 14:2ຂ). ບັດນີ້ໃນພຣະຄໍາພຣະນິມິດບົດທີ່ 21, ພວກເຮົາເຫັນພຣະເຢຊູກໍາລັງເຮັດໃຫ້ຄໍາສັນຍາຕລອດໄປເປັນນິດໃຫ້ເປັນຈິງ. ພຣະເຢຊູບໍ່ໄດ້ພຽງແຕ່ເຮັດທວນຄືນໃນສິ່ງທີ່ພວກເຮົາຮູ້ຈັກແລ້ວນັ້ນຊື່ໆ. ໃນພຣະຄຣິດ, ພວກເຮົາກາຍເປັນຄົນທີ່ຊົງຖືກສ້າງຂຶ້ນໃໝ່ (2 ກຣທ 5:17), ແລະພວກເຮົາຈະຢູ່ກັບພຣະອົງຢ່າງຕລອດໄປເປັນນິດໃນສິ່ງທີ່ພຣະອົງຊົງສ້າງຂຶ້ນມາໃໝ່.

| |
|---|
| ແມ່ນຫຍັງຄືບາງຢ່າງທີ່ທ່ານຢາກເຫັນມັນເກີດຂຶ້ນມາໃໝ່? |

## 2. ພຣະນິມິດ 21:6-8

*6. ພຣະອົງຊົງກ່າວກັບຂ້າພະເຈົ້າວ່າ, "ສໍາເຣັດແລ້ວ ເຮົານີ້ຄືອັນຟາແລະໂອເມຄາ ເປັນເບື້ອງຕົ້ນແລະເປັນເບື້ອງປາຍ ຜູ້ໃດຫິວນໍ້າ ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນໍ້າພຸແຫ່ງຊີວິດໂດຍບໍ່ຕ້ອງເສັຽຄ່າ. 7. ຜູ້ໃດມີຊັຍຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫຼົ່ານີ້ເປັນມໍຣະດົກ ເຮົາຈະເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫຼະ, ຈະເປັນບຸດຂອງເຮົາ. 8. ແຕ່ສ່ວນຄົນຂີ້ໂຢ່ຍ ຄົນບໍ່ເຊື່ອ ຄົນທີ່ເຮັດການໜ້າກຽດໜ້າຊັງ ຄົນຄາຕກັມ ຄົນລ່ວງຜິດຊາຍຍິງ ຄົນໃຊ້ເວດມົນຄາຖາ ຄົນໄຫວ້ພຣະທຽມ ແລະຄົນຂີ້ຕົວະທຸກຄົນນັ້ນ ມໍຣະດົກຂອງເຂົາຈະຢູ່ໃນບຶງທີ່ໄໝ້ຢູ່ດ້ວຍໄຟປົນກັບມາດຊຶ່ງເປັນຄວາມຕາຍຄັ້ງທີ່ສອງ".*

ເມື່ອພຣະເຢຊູໄດ້ຖືກຄຶງທີ່ໄມ້ກາງແຂນແລ້ວ, ພຣະອົງໄດ້ຮ້ອງໄຫ້. "ສໍາເຣັດແລ້ວ" (ຢຮ 19:30). ບັດນີ້ພຣະອົງໄດ້ປະກາດແກ່ທ່ານໂຢຮັນ, "ສໍາເຣັດແລ້ວ!" ທັງໝົດນີ້ໄດ້ຈົບສິ້ນໃນສິ່ງທີ່ຊົງສ້າງຂຶ້ນໃໝ່ຂອງພຣະເຈົ້າ. ເຫິງໄມ້

ກາງແຂນ, ພຣະເຢຊູໄດ້ກະທຳການໄຖ່ພວກເຮົາໃຫ້ພົ້ນບາບສຳເລັດແລ້ວ., ແລະບັດນີ້ໃນພຣະຄຳພຣະນິມິດບົດທີ່ 21, ພຣະອົງໝາຍບ່ອນຈົບສິ້ນປະຫວັດຂອງການໄຖ່ໃຫ້ພົ້ນຄວາມຜິດບາບ. ພຣະອົງສາມາດເຮັດຢ່າງນີ້ໄດ້ກໍເພາະວ່າພຣະອົງ "ເປັນຜູ້ຕົ້ນແລະເປັນຜູ້ປາຍ, ເປັນເບື້ອງຕົ້ນແລະເປັນເບື້ອງປາຍ" (ຂໍ້ 6). ພຣະອົງໄດ້ເລີ້ມຕົ້ນປະຫວັດສາດ, ແລະພຣະອົງກໍຈະນຳໃຫ້ມັນຈົບລົງໄດ້. ພຣະເຢຊູແມ່ນພຣະເຈົ້າ; ພຣະອົງຊົງເປັນຢູ່ຕັ້ງແຕ່ຕອນເລີ້ມຕົ້ນແລະພຣະອົງຍັງເປັນຢູ່ເໜືອທີ່ສຸດປາຍໄປອີກ. ພຣະອົງເປັນພຣະຜູ້ຊົງສ້າງສັພສິ່ງທັງປວງ-ທຸກສິ່ງກໍມີຈຸດເລີ້ມຕົ້ນທີ່ພຣະອົງ, ແລະທຸກໆສິ່ງພົບຫຼັກຊັຍຂອງພວກມັນຫຼືຈົບລົງໃນພຣະອົງ.

ສິ່ງທັງໝົດທີ່ພວກເຮົາໄດ້ອ່ານມາ ມັນບັນລະຍາຍເຖິງສະຖານທີ່ໜ້າອັສຈັນເຫຼືອເກີນ. ເຖິງປານນັ້ນສັງຄົມຂອງພວກເຮົາກໍມີຂໍ້ແມ້ໃຫ້ພວກເຮົາເບິ່ງສິ່ງອັສຈັນທີ່ປະໄວ້ໃຫ້ແລະຍັງຖາມໄປວ່າ "ແມ່ນຫຍັງຄືຂໍ້ຜູກມັດ?" ຂ້າພະເຈົ້າຕ້ອງເວົ້າຕົງໆກັບທ່ານວ່າ; ມັນມີຂໍ້ຜູກມັດ. ຂອງປະທານສະຖານທີ່ອັນຕລອດໄປເປັນນິດບໍ່ແມ່ນໄດ້ຢ່າງອັດຕະໂນມັດ. ຄວາມປະສົງຂອງພຣະເຢຊູແມ່ນເປີດໃຫ້ແກ່ທຸກໆຄົນ, ແຕ່ວ່າຜູ້ທີ່ສາມາດເຂົ້າໄປໃນແຜ່ນດິນສວັນແລະແຜ່ນດິນໂລກໃໝ່ແມ່ນພວກທີ່ຕິດຕາມພຣະເຢຊູເທົ່ານັ້ນ.

1. **"ຝ່າຍເຮົາຈະໃຫ້ຜູ້ນັ້ນດື່ມຈາກນ້ຳພຸແຫ່ງຊີວິດໂດຍບໍ່ຕ້ອງເສັຽຄ່າ"** (ຂໍ້ 6). ພວກເຮົາຕ້ອງສາລະພາບວ່າພວກເຮົາກະຫາຍນ້ຳແລະເຊື່ອວ່າພຣະເຢຊູແມ່ນຜູ້ດຽວເທົ່ານັ້ນທີ່ສາມາດລະງັບຄວາມກະຫາຍນັ້ນໄດ້.
2. **"ຜູ້ໃດມີຊັຍຊະນະ ຜູ້ນັ້ນຈະໄດ້ຮັບສິ່ງເຫຼົ່ານີ້ເປັນມໍຣະດົກ"** (ຂໍ້ 7). ພວກເຮົາມີຊັຍຊະນະເມື່ອພວກເຮົາຫາກຢືນຢ່າງເຂັ້ມແຂງແລະສັດຊື່ຕໍ່ພຣະຄຣິດ, ແລະພວກເຮົາສູ້ແລະພວກເຮົາໄດ້ຊະນະໂດຍຜ່ານພຣະອົງ.

ທັງໝົດນີ້ແມ່ນເຊື່ອມໂຍງສາຍສຳພັນຂອງພວກເຮົາກັບພຣະເຢຊູ. ເມື່ອພວກເຮົາມາຫາພຣະຄຣິດ, ພວກເຮົາໄດ້ຖືກຮັບເຂົ້າສູ່ຄອບຄົວຂອງພຣະເຈົ້າ (ໂຣມ 8:14-15). ພວກເຮົາຈະປະສົບການຢ່າງເຕັມສ່ວນກັບຜົນປໂຍດທັງໝົດຂອງສາຍສຳພັນໃນຄອບຄົວນັ້ນຊຶ່ງແມ່ນເຮືອນອະນາຄົດຂອງພວກເຮົາ. "ເຮົາຈະເປັນພຣະເຈົ້າຂອງເຂົາ ເຂົານັ້ນແຫຼະ, ຈະເປັນບຸດຂອງເຮົາ" (ຂໍ້ 7).

ພຣະຜູ້ເປັນເຈົ້າໄດ້ເວົ້າຢ່າງແຈ່ມແຈ້ງ, ເຖິງປານນັ້ນ, ກໍບໍ່ແມ່ນທຸກຄົນຈະຊົມຊື່ນກັບຜົນປໂຍດຕ່າງໆແລະສະງ່າຣາສີຂອງແຜ່ນດິນສວັນແລະແຜ່ນດິນໂລກໃໝ່. ໃນຂໍ້ 8, ພຣະອົງໄດ້ລຽງລຳດັບ "ແຕ່ສ່ວນຄົນຂີ້ໂຢ່ຍ ຄົນບໍ່ເຊື່ອຄົນທີ່ເຮັດການໜ້າກຽດໜ້າຊັງ ຄົນຄາຕກັມ ຄົນລ່ວງຜິດຊາຍຍິງ ຄົນໃຊ້ເວດມົນຄາຖາ ຄົນໄຫວ້ພຣະທຽມ ແລະຄົນຂີ້ຕົວະທຸກຄົນ." ໃນອະດີດ, ພວກເຮົາອາດຈະຮູ້ສຶກຜິດຕໍ່ຄວາມຜິດບາບເຫຼົ່ານີ້, ແຕ່ວ່າພຣະຄຳຂໍ້ນີ້ກຳລັງເລັງເຖິງພວກທີ່ໄດ້ເລືອກຢູ່ໃນຄວາມຜິດບາບຂອງພວກເຂົາແທນທີ່ຈະເລືອກເອົາພຣະຄຣິດ.

ພຣະເຈົ້າກຳລັງຈັດຕຽມບ້ານອັນອັສຈັນບ່ອນທີ່ພວກເຮົາຈະຢູ່ຢ່າງຕລອດໄປເປັນນິດ, ແຕ່ວ່າມັນຈະເປັນບ່ອນສະເພາະຂອງພວກທີ່ເຊື່ອໃນພຣະເຢຊູຄຣິດແຕ່ເທົ່ານັ້ນ. "ເຄື່ອງໝາຍພິເສດ" ໃນຄວາມເປັນຈິງແທ້ໆຂອງເຮືອນທີ່ແຜ່ນດິນສວັນຂອງທ່ານກໍຄືພຣະເຢຊູເປັນທາງດຽວເທົ່ານັ້ນທີ່ຈະໄດ້ຮັບຄວາມລອດພົ້ນ.

| |
|---|
| ເປັນຫຍັງສ່ວນຫຼາຍໃນຄວາມຄິດພວກເຮົາບໍ່ຄ່ອຍຍົກເອົາເລື້ອງຄວາມເປັນຈິງຂອງສວັນແລະນາຮົກຂຶ້ນມາກ່າວຂະນະທີ່ພວກເຮົາສົນທະນາກັບຄົນອື່ນໆ? |

## 3. ພຣະນິມິດ 22:1-5

*1. ແລ້ວເທວະດາຕົນນັ້ນໄດ້ຊີ້ໃຫ້ຂ້າພະເຈົ້າເຫັນແມ່ນ້ຳທີ່ມີຊີວິດໃສເໝືອນແກ້ວໄຫຼອອກມາຈາກພຣະຣາຊບັນລັງຂອງພຣະເຈົ້າ ແລະຂອງພຣະເມສານ້ອຍ. 2. ນ້ຳນັ້ນໄຫຼຜ່ານຖນົນຂອງນະຄອນນັ້ນ ຢູ່ຮິມແມ່ນ້ຳທັງສອງຟາກມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະນິດ ເກີດຜົນທຸກເດືອນ ແລະໃບຕົ້ນນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ. 3. ຈະບໍ່ມີສິ່ງໃດຖືກຊົງປ້ອຍດ່າອີກຕໍ່ໄປ ແຕ່ພຣະຣາຊບັນລັງຂອງພຣະເຈົ້າແລະຂອງພຣະເມສານ້ອຍຈະຕັ້ງຢູ່ທີ່ນັ້ນ ແລະບັນດາຂ້ອຍໃຊ້ຂອງພຣະອົງຈະບົວລະບັດພຣະອົງ. 4. ເຂົາຈະເຫັນພຣະພັກຂອງພຣະອົງແລະພຣະນາມຂອງພຣະອົງຈະຊົງປະທັບຕາໃສ່ໜ້າຜາກຂອງເຂົາ. 5. ກາງຄືນຈະບໍ່ມີອີກຕໍ່ໄປ ເຂົາບໍ່ຕ້ອງ*

*ການແສງໂຄມໄຟຫຼືແສງອາທິດ ເພາະວ່າອົງພຣະຜູ້ເປັນເຈົ້າຈະຊົງສ່ອງສວ່າງໃສ່ເຂົາ ແລະເຂົາຈະໄດ້ຄຸ້ມຄອງຢູ່ຕລອດໄປເປັນນິດ.*

ບາງຄົນມີຄວາມສາມາດອັນດີໃນການວາດຮູບດ້ວຍຄຳເວົ້າຊຶ່ງເຮັດໃຫ້ພວກເຮົາສາມາດຊີມຣົດ, ຮູ້ສຶກ, ແລະເຫັນມັນໄດ້. ທ່ານໂຢຮັນໄດ້ວາດພາບຢ່າງນັ້ນດ້ວຍນິມິດຂອງທ່ານຂອງແຜ່ນດິນສວັນແລະແຜ່ນດິນໂລກໃໝ່. ໃນຂໍ້ພຣະຄຳເຫຼົ່ານີ້, ພວກເຮົາ “ເຫັນ” ເຮືອນທີ່ອັສຈັນຊຶ່ງສັນຍາໄວ້ສຳລັບຜູ້ທີ່ເຊື່ອທຸກໆຄົນ. ທ່ານໂຢຮັນໄດ້ຈົດຈໍ່ສະເພາະໃສ່ກຸງເຢຣູຊາເລັມໃໝ່, ແລະມີຫ້າຮູບພາບທີ່ດູດເດັ່ນໃຫ້ພວກເຮົາໄດ້ເຫັນ: ແມ່ນ້ຳແຫ່ງຊີວິດ, ຕົ້ນໄມ້ແຫ່ງຊີວິດ, ໝາກໄມ້ຂອງຕົ້ນນັ້ນ, ໃບໄມ້ຂອງຕົ້ນນັ້ນ, ແລະບັນລັງຂອງພຣະເຈົ້າ.

ພວກເຮົາໄດ້ຮັບຮູບພາບສຸດຍອດຂອງເຮືອນອັນຕລອດໄປເປັນນິດຂອງພວກເຮົາ, ແຕ່ວ່າພວກເຮົາຈະເຮັດຫຍັງໃນທີ່ນັ້ນ? ສັງຄົມມັກນິຍົມແຕ້ມຮູບຄົນຢືນຍາວຢຽດບໍ່ມີບ່ອນສຸດກຳລັງຫຼິ້ນພິນ, ແຕ່ວ່າບໍ່ມີຂໍ້ພຣະຄຳໄດ້ສອນແນວນັ້ນ. ແທນທີ່ຈະເປັນດັ່ງນັ້ນ, ພວກເຮົາຈະເຮັດສາມຢ່າງນີ້:

- **ພວກເຮົາຈະນະມັສການພຣະເຈົ້າ.** ພວກເຮົາຈະປະກາດຄຳສັຣເສີນຕໍ່ພຣະອົງຢ່າງແນ່ນອນ, ແຕ່ວ່າການນະມັສການມັນເໜືອກວ່າຄຳເວົ້າທີ່ພວກເຮົາຮ້ອງເພງຫຼືເວົ້າ. ພວກເຮົານະມັສການໂດຍຜ່ານທາງການດຳເນີນຊີວິດ.
- **ພວກເຮົາຈະຮັບໃຊ້ພຣະເຈົ້າ.** ພວກເຮົາຖືກຮ້ອງວ່າ “ຂ້ອຍໃຊ້ຂອງພຣະອົງ,” ແຕ່ວ່າການບໍລິການຂອງພວກເຮົາຈະບໍ່ແມ່ນພາລະ.
- **ພວກເຮົາຈະປົກຄອງກັບພຣະເຈົ້າ.** ພຣະເຈົ້າເປັນກະສັດປົກຄອງເໜືອສັພສິ່ງທັງປວງ, ເຖິງປານນັ້ນພຣະອົງກໍຍັງຈະໃຫ້ສິດພິເສດແກ່ພວກເຮົາໃນການປົກຄອງກັບພຣະອົງຕລອດໄປເປັນນິດ.

ນິມິດຂອງທ່ານໂຢຮັນຊີ້ໃຫ້ເຫັນຄວາມສະງ່າງາມຂອງຊີວິດອັນຕລອດໄປເປັນນິດ. ພວກເຮົາກໍຄຸ້ນເຄີຍກັບປະໂຫຍກນີ້ “ຖ້າວ່າມັນເບິ່ງຄືວ່າໜ້າຈະແມ່ນຄວາມຈິງ, ມັນກໍອາດຈະແມ່ນແທ້,” ແຕ່ວ່າມັນບໍ່ແມ່ນແນວນັ້ນໃນທີ່ນີ້. ທ່ານໂຢຮັນໄດ້ຂຽນໄວ້ວ່າພຣະເຢຊູໄດ້ປະກາດຕໍ່ທ່ານວ່າ, “ຖ້ອຍຄຳເຫຼົ່ານີ້ແຫຼະສັດຊື່ແລະທ່ຽງແທ້ (ພນມ 22:6).

## <u>ນຳໃຊ້ໃນຊີວິດ:</u>

ຄຳສັນຍາຂອງຊີວິດອັນຕລອດໄປເປັນນິດກັບພຣະຄຣິດມັນສະທ້ອນທາງເປັນຢູ່ຂອງທ່ານຢ່າງໃດໃນອາທິດນີ້? ເລືອກເອົາການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ຈ້ອງຕາເບິ່ງພຣະຄຣິດ.** ຖ້າວ່າທ່ານບໍ່ໄດ້ໄວ້ວາງໃຈໃນພຣະຄຣິດ, ຈົ່ງວາງໃຈເຊື່ອໃນພຣະອົງ. ພຣະອົງມີພຣະປະສົງໃຫ້ທ່ານມາຫາພຣະອົງແລະຢູ່ກັບພຣະອົງຕລອດໄປເປັນນິດ.
- **ຈົດຈໍ່ໃສ່ສວັນ.** ໃນຖານະເປັນຜູ້ຕິດຕາມພຣະຄຣິດ, ທ່ານເປັນພົລເມືອງຂອງສວັນ (ຟລປ 3:20). ຢ່າໃຫ້ສິ່ງຂອງອັນຊົ່ວຄາວຂອງຊີວິດນີ້ທຳລາຍທ່ານ, ແຕ່ວ່າ “ຈົ່ງສແວງຫາສິ່ງທີ່ຢູ່ເບື້ອງເທິງ, ບ່ອນທີ່ພຣະຄຣິດຊົງສະຖິດຢູ່, ຊົງປະທັບກ້ຳຂວາຂອງພຣະເຈົ້າ. ຈົ່ງເອົາໃຈໃສ່ສິ່ງຊຶ່ງຢູ່ເບື້ອງເທິງ ບໍ່ໃຊ້ສິ່ງຊຶ່ງຢູ່ແຜ່ນດິນໂລກ” (ກລຊ 3:1-2).
- **ເຊື້ອເຊີນຄົນອື່ນໆໃຫ້ໄປສວັນ.** ສັງເກດເບິ່ງຄົນທີ່ທ່ານຮູ້ຈັກ ຜູ້ທີ່ບໍ່ມີຄວາມຫວັງກັບຊີວິດຕລອດໄປເປັນນິດເພາະວ່າພວກເຂົາບໍ່ໄດ້ວາງໃຈເຊື່ອໃນພຣະຄຣິດ. ຈົ່ງອະທິຖານແລະຊອກໂອກາດຕ່າງໆທີ່ຈະບອກພວກເຂົາວິທີຮັບເອົາຊີວິດຕລອດໄປເປັນນິດໃນສວັນກັບພຣະຄຣິດ.

ຊີວິດອັນຕລອດໄປເປັນນິດກັບພຣະເຢຊູແມ່ນຊົ່ວນິຣັນດອນ, ດັ່ງນັ້ນຈົ່ງເລືອກເຮັດຄວາມແຕກຕ່າງໃນເວລາສັ້ນໆທີ່ທ່ານມີໃນໂລກນີ້. ທ່ານຈະມີເວລາຊົ່ວນິຣັນດອນກັບສິ່ງທີ່ແນ່ນອນຢ່າງບໍ່ມີຄວາມເສັ່ງດາຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA